# ຖ້າແພດໃນຄລີນິກແນະນຳວ່າທ່ານໄດ້ຮັບການກວດ *Orthopoxvirus*

ແຍກຕົວຢູ່ບ້ານເພື່ອຫຼີກລ່ຽງການແພ່ເຊື້ອໄປຫາຜູ້ອື່ນ. ການກວດ Orthopoxvirus ຖືກນຳໃຊ້ເພື່ອກຳນົດວ່າທ່ານອາດຈະເປັນໄຂ້ທໍລະພິດລີງຫຼືບໍ່ (hMPXV).

ໃນຂະນະທີ່ລໍຖ້າຜົນກວດ, ໃຫ້ປ້ອງກັນລ່ວງໜ້າດັ່ງຕໍ່ໄປນີ້. ຖ້າຜົນກວດຂອງທ່ານເປັນບວກ, ສືບຕໍ່ປ້ອງກັນລ່ວງໜ້າຈົນກວ່າຜູ້ໃຫ້ບໍລິການເບິ່ງແຍງດູແລສຸຂະພາບຂອງທ່ານບອກວ່າມັນເຖິງເວລາຢຸດແລ້ວ (ໂດຍສະເພາະເມື່ອຜື່ນແດງດີຂຶ້ນແລ້ວ).

- ຕົວຢ່າງ: ປົກຜື່ນແດງດ້ວຍໂສ້ງຂາຍາວ ຫຼື ເສື້ອແຂນຍາວ.
- ຖ້າທ່ານບໍ່ສາມາດປົກຜື່ນແດງຂອງທ່ານໄດ້ງ່າຍ ຫຼື ທ່ານມີຜື່ນແດງຢ່ອນລົງ ຫຼື ໄອ, ເຈັບຄໍ ຫຼື ນ້ຳມູກໄຫຼ, ໃຫ້ແຍກຕົວເອງອອກຈາກຄອບຄົວ ແລະ ສັດລ້ຽງ
- ຫຼີກລ່ຽງການໃຊ້ຄອນແທັກເລນເພື່ອປ້ອງກັນການຕິດເຊື້ອໃສ່ຕາ.
- ຫຼີກລ່ຽງການແຖໜວດບ່ອນທີ່ທ່ານມີຜື່ນແດງ. ນີ້ສາມາດນຳໄປສູ່ການແພ່ກະຈາຍຂອງໄວຣັສ.
- ຖ້າເປັນໄປໄດ້, ໃຊ້ຫ້ອງນ້ຳແຍກຈາກສະມາຊິກຄອບຄົວຄົນອື່ນ.
- ເອົາສິ່ງເສດເຫຼືອຈາກຜ້າພັນບາດ, ເຄື່ອງນຸ່ງ ຫຼື ຖົງມືໃສ່ຖົງປລາສຕິກປິດແໜ້ນ. ກຳຈັດຖົງປລາສຕິກປິດແໜ້ນເຫຼົ່ານີ້ຖິ້ມໃນກະຕ່າຂີ້ເຫຍື້ອທີ່ກຳນົດໃຫ້ຢູ່ໃນຫ້ອງບ່ອນທີ່ທ່ານແຍກຕົວຢູ່.
- ເອົາຖົງຂີ້ເຫຍື້ອໃສ່ໄປໃນຖົງປລາສຕິກປິດແໜ້ນອີກຖົງໜຶ່ງເມື່ອທ່ານກຳຈັດຂີ້ເຫຍື້ອຖິ້ມ.
- ໃສ່ຖົງມືເມື່ອເອົາຖົງຂີ້ເຫຍື້ອອອກ ແລະ ຈັບຖົງ ແລະ ກຳຈັດຂີ້ເຫຍື້ອ.
- ຢ່າເຊີນຄົນທີ່ບໍ່ສ່ຽງຕິດພະຍາດເຂົ້າມາໃນເຮືອນຂອງທ່ານ, ນອກຈາກວ່າພວກເຂົາຈຳເປັນຕ້ອງໄດ້ຢູ່ທີ່ນັ້ນ.
- ຫຼີກລ່ຽງການສຳຜັດກັບສັດລ້ຽງ ແລະ ສັດອື່ນໆ. ໃຫ້ຄົນອື່ນຢູ່ໃນບ້ານລ້ຽງສັດເມື່ອເປັນໄປໄດ້.
- ໃສ່ໜ້າກາກຜ່າຕັດ, ໂດຍສະເພາະຖ້າທ່ານໄອ, ເຈັບຄໍ ຫຼື ນ້ຳມູກໄຫຼ.



OHA 4296 (07/13/2022) **LAO**

- ລ້າງມືຂອງທ່ານດ້ວຍນ້ຳ ແລະ ສະບູ ຫຼື ໃຊ້ເຫຼົ້າຖູເປັນປົກກະຕິ. ນອກນັ້ນໃຫ້ລ້າງມືຫຼັງຈາກສຳຜັດຜື່ນແດງ ຫຼື ເຄື່ອງນຸ່ງ, ຜ້າ ຫຼື ພື້ນຜິວໃດໜຶ່ງທີ່ອາດຈະສຳຜັດກັບຜື່ນແດງ.
- ໂທຫາໜ່ວຍແພດສຸກເສີນ, ຖ້າອາການຂອງທ່ານຮ້າຍແຮງລົງ ຫຼື ທ່ານມີການຫາຍໃຈຍາ. ແຈ້ງໃຫ້ພວກເຂົາຮູ້ວ່າທ່ານກຳລັງລໍຖ້າຜົນກວດ Orthopoxvirus ເພື່ອໃຫ້ພວກເຂົາສາມາດປ້ອງກັນລ່ວງໜ້າໄດ້ຢ່າງເໝາະສົມ.

**ຖ້າຄົນໃນຄອບຄົວຂອງທ່ານຄົນໜຶ່ງກຳລັງລໍຖ້າຜົນກວດ *Orthopoxvirus* ຫຼື ມີຜົນກວດເປັນບວກ:**

- ຈ□າກັດການສຳຜັດໃກ້ຊິດກັບຄົນທີ່ລໍຖ້າຜົນກວດ.
- ໃສ່ໜ້າກາກຜ່າຕັດຢູ່ໃນບ່ອນທີ່ມີຄົນກຳລັງລໍຖ້າຜົນກວດ.
- ລ້າງມືຂອງທ່ານດ້ວຍນ້ຳ ແລະ ສະບູ ຫຼື ໃຊ້ເຫຼົ້າຖູເປັນປົກກະຕິ. ນອກນັ້ນໃຫ້ລ້າງມືຫຼັງຈາກສຳຜັດຜື່ນແດງ ຫຼື ເຄື່ອງນຸ່ງ, ຜ້າຂອງຄົນເຈັບ ຫຼື ພື້ນຜິວໃດໜຶ່ງທີ່ອາດຈະສຳຜັດກັບຜື່ນແດງ.
- ຊັກເຄື່ອງບ່ອນນອນ, ເຄື່ອງນຸ່ງ ແລະ ການຊັກເຄື່ອງອື່ນໆໃນຈັກຊັກເຄື່ອງມາດຕະຖານດ້ວຍນ້ຳອຸ່ນ ແລະ ສະບູຝຸ່ນ; ອາດຈະເຕີມນ້ຳຢາຊັກຟອກໃສ່, ແຕ່ບໍ່ຈຳເປັນ. ຫຼີກລ່ຽງການສຳຜັດກັບເຄື່ອງບ່ອນນອນ ແລະ ຢ່າສັ່ນເຄື່ອງທີ່ເປື້ອນ.
- ຢ່າໃຊ້ຈານ ຫຼື ເຄື່ອງໃຊ້ກິນອາຫານກັບຄົນທີ່ລໍຖ້າຜົນກວດ. ຈານ ແລະ ເຄື່ອງໃຊ້ກິນອາຫານທີ່ເປື້ອນແມ່ນຄວນນໄປລ້າງໃນຈັກລ້າງຖານ ຫຼື ໃຊ້ມືລ້າງດ້ວຍນ້ຳອຸ່ນ ແລະ ສະບູ. ຄົນອື່ນສາມາດໃຊ້ຈານທີ່ຄົນລໍຖ້າຜົນກວດຢູ່ນັ້ນໃຊ້ແລ້ວໄດ້ຫຼັງຈາກທີ່ໄດ້ລ້າງມັນຢ່າງເໝາະສົມແລ້ວ.
- ທຳຄວາມສະອາດ ແລະ ຂ້າເຊື້ອພື້ນຜິວທີ່ປົນເປື້ອນ. ອາດຈະນຳໃຊ້ນ້ຳຢາຂ້າເຊື້ອ/ທຳຄວາມສະອາດໃນເຮືອນມາດຕະຖານໄດ້ໂດຍປະຕິບັດຕາມຄຳແນະນຳຂອງຜູ້ຜະລິດ.
- ປະຕິບັດຕາມຄຳແນະນຳຂອງ CDC ກ່ຽວກັບການຂ້າເຊື້ອຢູ່ເຮືອນ.

**ຖ້າທ່ານມີຜົນກວດ *Orthopox* ເປັນລົບ, ທ່ານສາມາດຢຸດໃຊ້ມາດຕະການພິເສດເຫຼົ່ານີ້ໄດ້.**

**ການເຂົ້າເຖິງຂໍ້ມູນ:** ສ□າລັບບຸກຄົນພິການ ຫຼື ຜູ້ທີ່ເວົ້າພາສາອື່ນທີ່ບໍ່ແມ່ນພາສາອັງກິດ, OHA ສາມາດໃຫ້ຂໍ້ມູນໃນຫຼາຍຮູບແບບເຊັ່ນ: ການແປພາສາ, ການພິມຂະໜາດໃຫຍ່ ຫຼື ອັກສອນນູນ. ຕິດຕໍ່ໜ່ວຍງານ

ສື່ສານ COVID-19 ທີ່ເບີ 1-971-673-2411, 711 TTY ຫຼື [COVID19.LanguageAccess@dhsoha.state.or.us](mailto:COVID19.LanguageAccess@dhsoha.state.or.us)